ສຳນັກງານ ຄຄຊ
ເລກທີ ......0492.....
ວັນທີ 10 MAY 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 19 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 08 ພຶດສະພາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 16-20/04/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,33% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກຍອດຂາຍສິນຄ້າຂາຍຍ່ອຍ ຂອງເດືອນ 03/2018 ເພີ່ມຂຶ້ນ 0,6% ຈາກຫຼຸດລົງ 0,1% ໃນເດືອນຜ່ານມາ ແລະ ໃບອະນຸຍາດການກໍ່ສ້າງ ຂອງເດືອນ 03/2018 ເພີ່ມຂຶ້ນ 2,5% ຈາກຫຼຸດລົງ 4,1% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 09-13/04/2018 | ອາທິດນີ້ 16-20/04/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2340 | 1,2300 | 0,33% |
| ເຢນ/ໂດລາ | 107,63 | 107,65 | -0,02% |
| ບາດ/ໂດລາ | 31,14 | 31,30 | -0,51% |
| ເປໂຊ/ໂດລາ | 51,94 | 52,16 | -0,42% |
| ຣູເປັຍ/ໂດລາ | 13.752,00 | 13.875,00 | -0,89% |
| ໂດລາສິງກະໂປ/ໂດລາ | 1,3114 | 1,3147 | -0,25% |
| ຢວນ/ໂດລາ | 6,2876 | 6,2910 | -0,05% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 1,88% ຈາກ 67,05 ໂດລາ/ບາເຣວ ມາເປັນ 68,31 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ຫຼຸດລົງ 1,07 ລ້ານບາເຣວ ຂອງອາທິດທີ 13/04/2018;

- ສຳລັບລາຄາຄຳເພີ່ມຂຶ້ນ 0,08% ຈາກ 1.339,51 ໂດລາ/ອອນ ມາເປັນ 1.340,60 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,05% ແຕ່ແຂງຄ່າຂຶ້ນ 0,18% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,10% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,16% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 13/04/2018 | | | ອາທິດນີ້ 20/04/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.307,16 | 8.329,22 | 8.317,08 | 8.308,89 | 8.329,15 | 8.321,15 | -0,02% | 0,001% | -0,05% | -0,09% | -0,03% | -0,10% |
| ບາດ | 267,18 | 268,32 | 267,76 | 266,49 | 267,95 | 267,26 | 0,26% | 0,14% | 0,18% | -4,30% | -4,18% | -4,16% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,11% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,39%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,04% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,98%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (13-19/04/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 1,60 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 10,04 ລ້ານໂດລາ ແລະ ຂາຍໂດລາໄດ້ 8,44 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 66,78 ລ້ານບາດ (ໃນນີ້ຊື້ບາດໄດ້ 76,44 ລ້ານບາດ ແລະ ຂາຍບາດໄດ້ 143,22 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 74,98% ແລະ ເງິນບາດ ຫຼຸດລົງ 70,49%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,87 ລ້ານໂດລາ ແລະ ເງິນບາດ ຈຳນວນ 72,10 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 06-12/04/2018 | | ອາທິດນີ້ 13-19/04/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **41,20** | **236,26** | **10,04** | **76,44** | **-75,63%** | **-67,65%** |
| - ທ/ຄທຸລະກິດລັດ | 13,19 | 76,99 | 4,52 | 24,37 | -65,73% | -68,35% |
| - ທ/ຄທຸລະກິດອື່ນໆ | 28,01 | 159,27 | 5,52 | 52,07 | -80,29% | -67,31% |
| **2. ການຂາຍເງິນຕາຕ່າງປະເທດ** | **32,67** | **508,15** | **8,44** | **143,22** | **-74,17%** | **-71,82%** |
| - ທ/ຄທຸລະກິດລັດ | 9,87 | 180,54 | 2,21 | 42,90 | -77,61% | -76,24% |
| - ທ/ຄທຸລະກິດອື່ນໆ | 22,80 | 327,61 | 6,23 | 100,32 | -72,68% | -69,38% |
| **ຊື້-ຂາຍສຸດທິ ທທກ** | **8,53** | **-271,89** | **1,60** | **-66,78** | **-81,24%** | **-75,44%** |
| - ຜົດຕ່ຽງຊື້-ຂາຍ | 20,70% | -115,08% | 15,94% | -87,36% | -23,00% | -24,09% |
| - ມູນຄ່າການຊື້-ຂາຍ | **73,87** | **744,41** | **18,48** | **219,66** | **-74,98%** | **-70,49%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-5,90** | **-145,70** | **0,00** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,30 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 5,90 | 146,00 | 0,00 | 0,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **4,00** | **41,55** | **3,87** | **72,10** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 04/2018 ຄາດວ່າຈະຢູ່ໃນລະດັບ 2,70% (ຕົວເລກຄາດຄະເນ).

**2,5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 31,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 14,58 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 96,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 2,35 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 408 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 444 ສະບັບ ເທົ່າກັບ 52,11% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 175,89 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 229,72 ຕື້ກີບ ເທົ່າກັບ 56,63%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (13-19/04/2018) ມີທັງໝົດ 1,286 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 1,286 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 1.321 ຕື້ກີບ ຈາກ 1.909,81 ຕື້ກີບ ມາເປັນ 239,71 ຕື້ກີບ ເທົ່າກັບ 84,63%;
- **ກະຊວງການເງິນ:** ແມ່ນບໍ່ມີການເຄື່ອນໄຫວ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 954,31 ຈຸດ ເພີ່ມຂຶ້ນ ຈາກ 953,96 ຈຸດ ຫຼື ເທົ່າກັບ 0,04% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 18.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 87.050.000 ກີບ ຫຼຸດລົງ 33,35% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 38,77% ຂອງມູນຄ່າການຊື້-ຂາຍທັງໝົດ.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| **BCEL** | 15.100 | 79.885.000 | 5.350 | **7.600** | **40.660.000** | **5.350** | -49.67 | -49,10 | - | 0 |
| **EDL-GEN** | 4.200 | 19.630.000 | 4.700 | **9.100** | **42.770.000** | **4.700** | 116.67 | 117,88 | - | 0 |
| **LWPC** | 6.200 | 24.200.000 | 3.900 | **200** | **800.000** | **4.000** | -96.77 | -96,69 | 100 | 2,56 |
| **PTL** | 1.000 | 1.700.000 | 1.700 | - | - | **1.700** | - | - | 0 | 0,00 |
| **SVN** | - | - | 2.900 | - | - | **2.900** | - | - | 0 | 0.00 |
| **PCD** | 600 | 840.000 | 1.400 | - | - | **1.400** | - | - | 0 | 0 |
| **LCC** | 2.000 | 4.700.000 | 2.350 | **1.200** | **2.820.000** | **2.350** | -40.00 | -40,00 | -50 | -2,08 |
| ທັງໝົດ | 29.100 | 130.955.000 | | **18.100** | **87.050.000** | | -37.80 | -33,53 | - | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ: ❶ ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ເມສາ 2018 ທີ່ (ຫສນຍ), ❷ ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ), ❸ ກອງປະຊຸມຄະນະຮັບຜິດຊອບເນື່ອໃນວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❹ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ❺ ພິທີເປີດໜ່ວຍບໍລິການບໍ່ເຕັມ ຂອງທະນາຄານຮ່ວມພັດທະນາ ທີ່ (ແຂວງຫຼວງນ້ຳທາ).

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມລັດຖະບານປະຈຳເດືອນ ເມສາ 2018 ທີ່ (ຫ້ອງປະຊຸມລັດຖະບານ), ❷ ກອງປະຊຸມຜ່ານເນື້ອໃນຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວຕໍ່ຄະນະປະຈຳຂອງສະພາແຫ່ງຊາດ, ❸ ກອງປະຊຸມເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະການບາເຊວ ແຕ່ປີ 2017-2025 ໃຫ້ແກ່ບັນດາກົມພາຍໃນ ທຫລ ແລະ ❹ ກອງປະຊຸມເຜີຍແຜ່ມາດຖານການຈັດລຳດັບໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ສຫຄ).

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ